ເມືອງ Lowell • ພະແນກສາທາລະນະສຸກ
ໜ່ວຍງານສາທາລະນະສຸກປະຈຳໂຮງຮຽນ
107 Merrimack Street • Lowell, MA 01852
ໂທ: 978.674-4305 • ແຟັກ: 978.446-7100
www.LowellMA.gov

# ຂໍ້ມູນໃໝ່! ການຮຽກຮ້ອງໃຫ້ສັກຢາປ້ອງກັນໄຂ້ຫວັດໃຫຍ່ (Influenza) ສໍາລັບການເຂົ້າຮຽນ

ຕັ້ງແຕ່ຕົ້ນສົກຮຽນ 2020-2021, **ນັກຮຽນທຸກຄົນຈະຕ້ອງໄດ້ສັກຢາ**ປ້ອງກັນໄຂ້ຫວັດໃຫຍ່ (influenza). ໃນຊ່ວງການລະບາດຂອງພະຍາດອັກເສບປອດ ໂຄວິດ-19 (COVID-19), ການສັກຢາປ້ອງກັນໄຂ້ຫວັດໃຫຍ່ ຈະມີຄວາມສໍາຄັນຢ່າງຍິ່ງ ເພື່ອຊ່ວຍຫຼຸດຜ່ອນຜົນກະທົບໂດຍລວມຂອງພະຍາດທາງເດີນຫາຍໃຈທີ່ພົບເຫັນໃນປະຊາກອນ, ປົກປ້ອງປະຊາກອນທີ່ຢູ່ໃນກຸ່ມສ່ຽງຈາກການເຈັບປ່ວຍຂັ້ນຮຸນແຮງ ແລະ ຫຼຸດຜ່ອນຄວາມຍາກລໍາບາກໂດຍລວມຕໍ່ກັບການເຂົ້າເຖິງລະບົບການດູແລສຸຂະພາບ.

**ນັກຮຽນກຸ່ມໃດທີ່ຕ້ອງໄດ້ຮັບການສັກຢາປ້ອງກັນໄຂ້ຫວັດໃຫຍ່?**
ສໍາລັບການເຂົ້າຮຽນ, ນັກຮຽນໃນລະດັບຊັ້ນຮຽນ Pre K ໄປຈົນຮອດຊັ້ນເກຣດ 12 ແມ່ນຈໍາເປັນຈະຕ້ອງໄດ້ຮັບການສັກຢາປ້ອງກັນໄຂ້ຫວັດໃຫຍ່ສໍາລັບລະດູການໄຂ້ຫວັດໃຫຍ່ໃນປະຈຸບັນ.

**ນັກຮຽນຕ້ອງໄດ້ຮັບການສັກຢາປ້ອງກັນໄຂ້ຫວັດໃຫຍ່ເມື່ອໃດ?**
ນັກຮຽນຕ້ອງໄດ້ຮັບການສັກຢາປ້ອງກັນໄຂ້ຫວັດໃຫຍ່ສໍາລັບລະດູການປະຈຸບັນກ່ອນວັນທີ 31 ທັນວາ 2020.

**ນັກຮຽນຜູ້ທີ່ບໍ່ມີເອກະສານຢັ້ງຢືນວ່າໄດ້ຮັບການສັກຢາປ້ອງກັນໄຂ້ຫວັດໃຫຍ່ຕາມລະດູການຈະຖືກຄັດອອກຈາກການເຂົ້າຮຽນໃນວັນທີ 1 ມັງກອນ ຫຼືບໍ່?**
ນັກຮຽນທີ່ບໍ່ໄດ້ຮັບການສັກຢາປ້ອງກັນໄຂ້ຫວັດໃຫຍ່ກ່ອນວັນທີ 1 ມັງກອນ 2021 ແມ່ນຈະຖືກຄັດອອກຈາກການເຂົ້າຮຽນ.

**ແລ້ວນັກຮຽນທີ່ລົງທະບຽນຫຼັງຈາກວັນທີ 31 ທັນວາ ເດ?**
ນັກຮຽນໃໝ່ທີ່ລົງທະບຽນໃນລະຫວ່າງວັນທີ 1 ມັງກອນ ຫາ 31 ມີນາ ຈະຕ້ອງມີເອກະສານຢັ້ງຢືນວ່າໄດ້ຮັບການສັກຢາປ້ອງກັນໄຂ້ຫວັດໃຫຍ່ສໍາລັບລະດູການໄຂ້ຫວັດໃຫຍ່ໃນປະຈຸບັນ (ພ້ອມທັງການສັກຢາປ້ອງກັນພະຍາດອື່ນໆທີ່ຈໍາເປັນທັງໝົດ) ເມື່ອພວກເຂົາເຂົ້າຮຽນ.

**ມີຄວາມຈໍາເປັນຕ້ອງໄດ້ສັກຢາປ້ອງກັນໄຂ້ຫວັດໃຫຍ່ທຸກໆປີ ຫຼື ພຽງແຕ່ສໍາລັບສົກຮຽນ 2020-2021 ເທົ່ານັ້ນ?**
ໃນປະຈຸບັນ, ການສັກຢາປ້ອງກັນໄຂ້ຫວັດໃຫຍ່ ເປັນສິ່ງທີ່ຈໍາເປັນສໍາລັບການເຂົ້າຮຽນ ແລະ ຈະຕ້ອງໄດ້ສັກກ່ອນວັນທີ 31 ທັນວາ ສໍາລັບນັກຮຽນທຸກຄົນຕັ້ງແຕ່ຊັ້ນຮຽນ Pre K ໄປຈົນຮອດຊັ້ນເກຣດ 12 ໃນແຕ່ລະສົກຮຽນ.

**ຖ້າໂຮງຮຽນຂອງຂ້ອຍຈັດການສອນໃນຮູບແບບທາງໄກ, ນັກຮຽນຍັງຈໍາເປັນຈະຕ້ອງໄດ້ສັກຢາປ້ອງກັນພະຍາດຢູ່ອີກຫຼືບໍ່?**
ການຮຽກຮ້ອງໃຫ້ສັກຢາປ້ອງກັນພະຍາດຂອງໂຮງຮຽນ, ລວມເຖິງຂໍ້ກໍານົດໃນການສັກຢາປ້ອງກັນໄຂ້ຫວັດໃຫຍ່ຕາມລະດູການ, ແມ່ນມີຜົນບັງຄັບໃຊ້ກັບນັກຮຽນທຸກຄົນຂອງລັດ Massachusetts ທີ່ລົງທະບຽນຮຽນໃນລະດັບຊັ້ນຮຽນ Pre K ໄປຈົນເຖິງຊັ້ນຮຽນເກຣດ 12, ບໍ່ວ່າເຂດການສຶກສາຈະຈັດຮູບແບບການສິດສອນພາຍໃນໂຮງຮຽນ ຫຼື ແບບປະສົມ (ທັງຮຽນພາຍໃນໂຮງຮຽນ ແລະ ຮຽນຜ່ານຮູບແບບທາງໄກ) ຫຼື ຮູບແບບທາງໄກ.

ເມືອງ LOWELL *ມີຊີວິດຊີວາ, ເປັນເອກະລັກ, ສ້າງແຮງບັນດານໃຈ*